ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1846 /ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 02 OCT 2014

# ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ.

ເລື່ອງ: ປັບລົງ ລາຄາຂາຍຍ່ອຍ ນ້ຳມັນແອັດຊັງ ແລະ ນ້ຳມັນກາຊວນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ແຈ້ງການ ຄະນະເລຂາທິການລັດຖະບານ, ສຳນັກງານນາຍົກລັດຖະມົນຕີ ເລກທີ 800/ຫລບ, ລົງວັນທີ 22/04/2011.
- ອີງຕາມ ແຈ້ງການ ຫ້ອງວ່າການລັດຖະບານ ເລກທີ 743/ຫລບ, ລົງວັນທີ 02 ເມສາ 2012.
- ອີງຕາມ ສະພາບລາຄາຊື້-ຂາຍນ້ຳມັນເຊື້ອໄຟຢູ່ຕະຫຼາດໂລກໃນປະຈຸບັນໄດ້ມີການປ່ຽນແປງ ແລະ ເພື່ອໃຫ້ສອດຄ່ອງກັບກົນໄກຕະຫຼາດ.
- ອີງຕາມ ມາດຕາ 20 ຂອງກົດໝາຍສ່ວຍສາອາກອນ ສະບັບປັບປຸງໃໝ່, ເລກທີ 03/ສພຊ, ລົງວັນທີ 20 ທັນວາ 2011.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງບັນດາບໍລິສັດນ້ຳມັນເຊື້ອໄຟ ໃຫ້ປັບລາຄານ້ຳມັນເຊື້ອໄຟຂາຍຍ່ອຍໜ້າປ້ຳໃນແຕ່ລະຈຸດ ດັ່ງຕໍ່ໄປນີ້:

ຫົວໜ່ວຍ: ກີບ/ລິດ

| ລ/ດ | ລາຍການ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **11,040** | **9,710** | **8,640** |
| 2 | ແຂວງຄຳມ່ວນ | **11,040** | **9,750** | **8,670** |
| 3 | ແຂວງສະຫວັນນະເຂດ | **11,160** | **9,750** | **8,670** |
| 4 | ແຂວງຈຳປາສັກ | **11,160** | **9,750** | **8,710** |
| 5 | ແຂວງບໍ່ແກ້ວ | | **9,820** | **8,740** |
| 6 | ແຂວງຊຽງຂວາງ | | **9,950** | **8,900** |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 03/10/2014 , ເວລາ 06 : 00 . ໂມງ ໃນຂອບເຂດທົ່ວປະເທດ. ໃຫ້ບັນດາບໍລິສັດປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນໃຫ້ບໍລິການຢ່າງເປັນປົກກະຕິ.
- ສ່ວນການຄິດໄລ່ເສັຽພາສີ, ອາກອນຊົມໃຊ້, ອາກອນມູນຄ່າເພີ່ມ (ອພມ), ກອງທຶນທາງ, ຄ່າບໍລິການຂາຍຍ່ອຍແມ່ນ

ໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມໂຄງສ້າງ ທີ່ໄດ້ກຳນົດໄວ້ໃນໂຄງສ້າງລາຄານ້ຳມັນຂອງຈຸດຕ່າງໆ ຕາມແຈ້ງການສະບັບນີ້ ຈົນກວ່າຈະມີການປ່ຽນແປງ.

- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 1624/ອຄ.ຄພນ, ລົງວັນທີ 10/09/2014.

* ໝາຍເຫດ:

ສ່ວນຈຸດອື່ນໆ ແມ່ນໃຫ້ຄິດໄລ່ຄ່າຂົນສົ່ງ ແລ້ວບວກເຂົ້າຄືປະຕິບັດຜ່ານມາຢ່າງເໝາະສົມ ແລ້ວໃຫ້ບໍລິສັດລາຍງານໃຫ້ ກົມການຄ້າພາຍໃນຊາບດ້ວຍ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ**

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ

ບ່ອນສົ່ງ

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ)
- ຫ້ອງວ່າການລັດຖະບານ (ໃຊ້ຕາງລາຍງານ)
- ຫ້ອງການ ກະຊວງການເງິນ (ເພື່ອຊາບ)
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ)
- ກົມພາສີ, ກົມສ່ວຍສາອາກອນ ແລະ ກົມງົບປະມານ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື)
- ກອງທຶນບູລະນະທາງຫຼວງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ບັນດາກົມທີ່ກ່ຽວຂ້ອງອ້ອມຂ້າງກະຊວງ ອຄ (ເພື່ອຊາບ ແລະຕິດຕາມ)
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ)